# ໝວກໃໝ່ຂອງບຸນຕອງ



LA-LLP-15-0007_Text_Bountong'sNewHat.indd 1 6/18/23 22:45

ບຸນຕອງມີໝວກໃໝ່ລາວເຮັດດ້ວຍ
ຕົນເອງ.





LA-LLP-15-0007_Text_Bountong'sNewHat.indd 1 6/18/23 22:45

ໝວກເປັນສີນ້ຳຕານມີຫາງຍາວ ມີເຂົາ ແລະ ຕາໃຫຍ່.





LA-LLP-15-0007_Text_Bountong'sNewHat.indd 2 6/18/23 22:45

ໝວກຂອງລາວ
ຄ້າຍຄືຄວາຍບັກເລຂອງລາວ.





LA-LLP-15-0007_Text_Bountong'sNewHat.indd 3 6/18/23 22:45



ແລ້ວລົມກໍພັດ
ວູດ! ວູດ! ວູດ!
ຫາງຂອງມັນ
ກໍປິວຂຶ້ນ ປັບ! ປັບ! ປັບ!



LA-LLP-15-0007_Text_Bountong'sNewHat.indd 4 6/18/23 22:45

ບຸນຕອງມີຄວາມສຸກກັບໝວກໃໝ່,
ລາວໃສ່ແລ່ນໄປຫາຄວາຍ
ຂອງລາວ ວາວ...! ວາວ...!





LA-LLP-15-0007_Text_Bountong'sNewHat.indd 5 6/18/23 22:45

ບຸນຕອງພູມໃຈກັບໝວກໃໝ່,
ຄວາຍຂອງບຸນຕອງກໍມີຄວາມສຸກ
ເຮ...! ເຮ...!





LA-LLP-15-0007_Text_Bountong'sNewHat.indd 6 6/18/23 22:45

ລາວຂີ່ຄວາຍແລ່ນຂ້າມທົ່ງກັບໝວກ
ຂອງລາວໄປຕາມລົມ.





LA-LLP-15-0007_Text_Bountong'sNewHat.indd 7 6/18/23 22:45



ເຢ...!ເຢ....! ບຸນຕອງຮ້ອງຂຶ້ນ, ເຢ! ເຢ! ເຢ!
ຄວາຍກໍຮ້ອງຂຶ້ນ ລົມຫຼວງເຫັນກໍຮ້ອງຂຶ້ນດັງ

ອູ...! ອູ...!



LA-LLP-15-0007_Text_Bountong'sNewHat.indd 8 6/18/23 22:45

ແຕ່ລົມພັດແຮງຂຶ້ນ ພັດແຮງຂຶ້ນ

ຫາງຂອງໝວກປິວແຮງຂຶ້ນ.





LA-LLP-15-0007_Text_Bountong'sNewHat.indd 9 6/18/23 22:45

ຫາງໝວກຮັດຄໍບຸນຕອງ
ບຸນຕອງຕົກຈາກຫຼັງຄວາຍ.





LA-LLP-15-0007_Text_Bountong'sNewHat.indd 10 6/18/23 22:45

ບຸນຕອງໃຈຮ້າຍ ຄວາຍເສຍໃຈທີ່
ເຫັນບຸນຕອງຕີກາຫຼັງຂອງມັນ.





LA-LLP-15-0007_Text_Bountong'sNewHat.indd 11 6/18/23 22:45

"ໜີໄປສາ!" ບຸນຕອງເວົ້າຂຶ້ນ ພ້ອມດຶກ
ໝວກຖິ້ມ ລົມພັດໝວກປິວໄປ.





LA-LLP-15-0007_Text_Bountong'sNewHat.indd 12 6/18/23 22:45



"ໄປເລີຍ! ໄປເລີຍ! ໄປເລີຍ!" ລົມເອີ້ນໃສ່
"ຂ້ອຍໄປກ່ອນເດີ" ໝວກບອກລົມ.



LA-LLP-15-0007_Text_Bountong'sNewHat.indd 13 6/18/23 22:45

ໝວກປິວຂຶ້ນໄປຫາທ້ອງຟ້າ,
ປິວສູງຂຶ້ນ ປິວສູງໄປເລື້ອຍໆ.





LA-LLP-15-0007_Text_Bountong'sNewHat.indd 14 6/18/23 22:45

ແລ້ວຝົນກໍຕົກລົງມາ "ໝວກຂ້ອຍ! ໝວກຂ້ອຍຢູ່ໃສ?" ບຸນຕອງຮ້ອງ ຫາໝວກ.





LA-LLP-15-0007_Text_Bountong'sNewHat.indd 15 6/18/23 22:45



ບຸນຕອງຂີ່ຄວາຍແຂ່ງຝົນຂ້າມທົ່ງ.

ບຸນຕອງສັ່ນໝາວຍ້ອນບໍ່ມີໝວກໃສ່
ຄວາຍກໍສັ່ນປຽກຝົນ





LA-LLP-15-0007_Text_Bountong'sNewHat.indd 17 6/18/23 22:45

ບຸນຕອງຮ້ອງໄຫ້ "ຄິດຮອດໝວກ ຂອງຂ້ອຍເດ! ກັບມາສາໝວກເອີຍ".





LA-LLP-15-0007_Text_Bountong'sNewHat.indd 18 6/18/23 22:45

ເມື່ອລົມໄດ້ຍິນສຽງບຸນຕອງໄຫ້
ລົມກໍພັດແຮງຂຶ້ນຕື່ມ.





LA-LLP-15-0007_Text_Bountong'sNewHat.indd 19 6/18/23 22:45

ບຸນຕອງຂີ່ຄວາຍຕາກຝົນ
ກັບເມືອເຮືອນ.





LA-LLP-15-0007_Text_Bountong'sNewHat.indd 20 6/18/23 22:45

ເມື່ອຮອດເຮືອນໝວກລໍຖ້າ
ລາວຢູ່ປະຕູບ້ານ.





LA-LLP-15-0007_Text_Bountong'sNewHat.indd 21 6/18/23 22:45



ຕອນເຊົ້າມາ, ບຸນຕອງໃສ່ໝວກ
ຂອງລາວຂີ່ຄວາຍລົງທົ່ງຢ່າງມີຄວາມສຸກ.





LA-LLP-15-0007_Text_Bountong'sNewHat.indd 23 6/18/23 22:45